**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ

ຫ້ອງວ່າການແຂວງ

ເລກທີ 1104/ຫວຂ

ອຸດົມໄຊ, ວັນທີ 22 ສິງຫາ 2024

# ແຈ້ງການແນະນຳ

**ເຖິງ: - ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການປົກຄອງ 7 ເມືອງ ທີ່ນັບຖື.**

**- ບັນດາລັດວິສາຫະກິດ, ທຸລະກິດ, ບຸກຄົນ ແລະ ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວກິດຈະການ ຢູ່ແຂວງອຸດົມໄຊ ທີ່ນັບຖື.**

**ເລື່ອງ: ການຂຶ້ນທະບຽນອອກໃບອະນຸຍາດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໂຟນີ (Walkie/Talkies) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ຢູ່ພາຍໃນແຂວງອຸດົມໄຊ.**

- ອີງຕາມ ກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງວ່າການແຂວງ ສະບັບເລກທີ 385/ຈຂ.ອຊ ລົງວັນທີ 05 ພຶດສະພາ 2021;
- ອີງຕາມ ໜັງສືສະເໜີຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 848/ຕສ, ລົງວັນທີ 14 ສິງຫາ 2024.

ຫ້ອງວ່າການແຂວງ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ອົງການປົກຄອງ 7 ເມືອງ, ລັດວິສາຫະກິດ, ທຸລະກິດ, ບຸກຄົນ ແລະ ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກິດຈະການ ຢູ່ແຂວງອຸດົມໄຊ ທີ່ມີອຸປະກອນສື່ສານໂຟນີ (Walkie/Talkies) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ໄວ້ຄອບຄອງ ຫຼື ມີຄວາມຕ້ອງການຈະນຳໃຊ້ໃນການເຄື່ອນໄຫວວຽກງານ, ກິດຈະການ, ທຸລະກິດຕ່າງໆ ຢູ່ແຂວງອຸດົມໄຊ ໃຫ້ປະຕິບັດດັ່ງນີ້:

1. ການຄອບຄອງ ຫຼື ນຳໃຊ້ອຸປະກອນສື່ສານໂຟນີ (Walkie/Talkies) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ຕ້ອງໄດ້ຮັບການຢັ້ງຢືນມາດຕະຖານເຕັກນິກ ແລະ ອອກອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມແຜນຜັງແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ແນໃສ່ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ;
2. ທຸກພາກສ່ວນ ທີ່ມີຈຸດປະສົງຈະນຳໃຊ້ ອຸປະກອນສື່ສານໂຟນີ (Walkie/Talkies) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ຕ້ອງໄດ້ຍື່ນຄຳຮ້ອງຂໍອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຈາກພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ, ຫຼັງຈາກໄດ້ຮັບອານຸຍາດ ຈຶ່ງນຳໃຊ້ໄດ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

ພາກສ່ວນ ທີ່ມີການນຳໃຊ້ອຸປະກອນສື່ສານໂຟນີ (Walkie/Talkies) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ໂດຍບໍ່ໄດ້ຮັບອະນຸຍາດ ແມ່ນໃຫ້ຮີບຮ້ອນໄປແຈ້ງຂຶ້ນທະບຽນ ແລະ ຍື່ນຄຳຮ້ອງຂໍອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຈາກ ພະແນກເຕັກໂນໂລຊີ ແລະ ການສື່ສານ **ພາຍໃນ 30 ວັນ** ນັບແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປ (ສຳນັກງານພະແນກ ເຕັກໂນໂລຊີ ແລະ ການສື່ສານ ຕັ້ງຢູ່ບ້ານດອນໄຊ, ເມືອງໄຊ, ໂທລະສັບ/ແຟັກ: 081 312 508, 020 2888 6464); ຖ້າກາຍກຳນົດເວລາດັ່ງກ່າວ ເມື່ອວິຊາການທີ່ກ່ຽວຂ້ອງລົງ

ກວດກາພົບເຫັນວ່າມີການລັກລອບນຳໃຊ້ ຈະໄດ້ປະຕິບັດມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

3. ສຳລັບເຄື່ອງບິນບໍ່ມີຄົນຂັບ (Drone) ພາຍຫຼັງໄດ້ຮັບໃບຢັ້ງຢືນຄົ້ນຄວ້າມຖີ່ວິທະຍຸສື່ສານ ຈາກພະແນກເຕັກໂນໂລຊີ ແລະ ການສື່ສານແລ້ວ ກ່ອນຈະຂຶ້ນບິນ ຕ້ອງໄດ້ຂໍໃບອະນຸຍາດຖ່າຍພາບ ນຳຂະແໜງການ ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ ຫຼື ຂັ້ນເມືອງ ແລະ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ສັງຄົມ ແລະ ອຳນວຍຄວາມສະດວກໃນການນຳໃຊ້ ຕ້ອງແຈ້ງແຜນການເຄື່ອນໄຫວ ໃຫ້ເຈົ້າໜ້າທີ່ ປກສ, ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນຮັບຊາບລ່ວງໜ້າ ຈຶ່ງດຳເນີນການຂຶ້ນບິນເຄື່ອງບິນບໍ່ມີຄົນຂັບ (Drone).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ແຂວງອຸດົມໄຊ ຫ້ອງວ່າການ

ນ.ຄຳໄພວອນ ປິນຍາວັກ